ບໍລິສັດ ລາວອາໂກຣເທັກ ມະຫາຊົນ

pwc

ເອກະສານລາຍງານການເງິນ (ທົບທວນຄືນ)

ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2020

www.pwc.com/la

ສາລະບານ	ໜ້າ

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ	1
ໃບລາຍງານຖານະການເງິນ	2
ໃບລາຍງານຜົນໄດ້ຮັບ	3
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	4
ໃບລາຍງານກະແສເງິນສົດ	5-6
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້	7 - 12

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນການເງິນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມີຖຸນາ 2020 ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີດຽວກັນ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍ ຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການສ້າງ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍ ການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນ ບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນປະຈຳປີ ຂອງບໍລິສັດ. ຄວາມຮັບຜິດຊອບ ຂອງພວກເຮົາຄືການອອກບົດລາຍງານ ເພື່ອສະແດງຄວາມເຫັນຕໍ່ເອກະສານລາຍງານການເງິນດັ່ງກ່າວ ບົນພື້ນຖານ ການທົບທວນຄືນ ຂອງພວກເຮົາ.

ຂອບເຂດ ການທົບທວນຄືນ

ພວກເຮົາໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບ ມາດຕະຖານ ການທົບທວນຄືນ ແບບສາກົນ 2410 "ການທົບທວນຄືນ ເອກະສານລາຍງານການເງິນ ໂດຍຜູ້ກວດສອບ ອິດສະຫຼະ", ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມ ບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິເຄາະຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນໃຫ້ຄວາມເຊື່ອໝັ້ນໜ້ອຍກວ່າການກວດສອບ ເພາະການກວດສອບ ແມ່ນໄດ້ປະຕິບັດຕາມ ມາດຕະຖານການກວດ ສອບສາກົນ ເພາະສະນັ້ນການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກເຮົາໄດ້, ດັ່ງນັ້ນ ພວກເຮົາຈະບໍ່ສະແດງຄວາມເຫັນບົນພື້ນຖານການກວດສອບ.

ສະຫລຸບ

ບົນພື້ນຖານການທົບທວນຄືນ ຂອງພວກເຮົາ, ບໍ່ມີຫຍັງທີ່ເປັນສາລະສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນ ດັ່ງກ່າວໄດ້ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບນະໂຍບາຍການບັນຊີຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ທີ 3 ໃນເອກະສານລາຍງານການເງິນນີ້.

ບໍລິສັດ ພຣາຍວໍເຕີເຮົ້າກຸບເປີ ສ (ລາວ) ຈຳກັດ ຜູ້ດຽວ

ທ່ານ ອາພິສິດ ທ່ຽງຕິງພິນໄຍ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ ສປປ ລາວ
ວັນທີ: 25 ສິງຫາ 2020

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານຖານະການເງິນ
ສິ້ນສຸດ ວັນທີ 30 ມິຖຸນາ 2020

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2020 ກີບ	ກວດສອບ 31 ທັນວາ 2019 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ		602.309.796	1.642.354.110
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ		12.977.212.537	12.316.222.480
ເຄື່ອງໃນສາງ, ສຸດທິ		1.643.746.916	2.773.520.035
ວັດສະດຸສະໜອງ, ສຸດທິ		1.517.178.741	1.716.636.754
ຄ່າເຍື່ອນຊໍາລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ		1.712.358.460	1.597.124.878
ຊັບສິນໝຸນວຽນອື່ນໆ		1.440.849.169	1.326.599.500
ລວມຊັບສິນໝຸນວຽນ		**19.893.655.619**	**21.372.457.757**
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄົງທີ່ ມີຕົວຕົນ, ສຸດທິ	4	21.874.714.001	23.037.515.848
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ	5	23.787.371.604	23.056.340.152
ຊັບສິນບໍ່ໝຸນວຽນອື່ນໆ		-	-
ລວມຊັບສິນບໍ່ໝຸນວຽນ		**45.662.085.605**	**46.093.856.000**
ລວມຊັບສິນ		**65.555.741.224**	**67.466.313.757**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		1.793.919.665	1.632.656.751
ເງິນກູ້ຢືມໄລຍະສັ້ນ	6	3.489.466.000	3.498.266.000
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	7	594.210.536	691.693.443
ໜີ້ສິນໝຸນວຽນອື່ນໆ		146.197.744	375.150.103
ລວມໜີ້ສິນໝຸນວຽນ		**6.023.793.945**	**6.197.766.297**
ໜີ້ສິນບໍ່ໝຸນວຽນ			
ໜີ້ຕ້ອງສົ່ງຈາກການເຊົ່າຊື້	7	1.290.726.603	1.330.129.132
ລວມໜີ້ສິນບໍ່ໝຸນວຽນ		**1.290.726.603**	**1.330.129.132**
ລວມໜີ້ສິນ		**7.314.520.548**	**7.527.895.429**
ທຶນເຈົ້າຂອງ			
ທຶນຈົດທະບຽນ		50.000.000.000	50.000.000.000
ສ່ວນເພີ່ມທຶນ		3.269.466.406	3.269.466.406
ກໍາໄລສະສົມ		-	-
ຄັງສະສົມຕາມລະບຽບການ		907.166.353	907.166.353
ກໍາໄລສະສົມລໍຖ້າແບ່ງປັນ		4.064.587.917	5.761.785.569
ລວມທຶນເຈົ້າຂອງ		**58.241.220.676**	**59.938.418.328**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**65.555.741.224**	**67.466.313.757**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອໍານວຍການ
ວັນທີ: 25 ສິງຫາ 2020

ທ່ານ ວັນສະເຫຼີມ ສີສຸດໍາມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 25 ສິງຫາ 2020

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2020

	ບິດ ອະທິບາຍ	ທີ່ຍທອນຄົນ 30 ມິຖຸນາ 2020 ກີບ	ທີ່ຍທອນຄົນ 30 ມິຖຸນາ 2019 ກີບ
ລາຍຮັບຈາກການຂາຍ ແລະ ການບໍລິການ		17.766.483.626	35.354.426.024
ຕົ້ນທຶນໃນການຂາຍ ແລະ ການບໍລິການ		(16.144.264.192)	(31.231.387.436)
ກຳໄລລວມ		**1.622.219.434**	**4.123.038.588**
ລາຍຈ່າຍການຂາຍ ແລະ ບໍລິຫານ		(3.338.629.355)	(3.632.175.324)
ລາຍຮັບອື່ນໆ		576.035.102	106.074.658
ຂາດທຶນຈາກອັດຕາແລກປ່ຽນ		(360.801.227)	(1.158.762.333)
ກຳໄລ/ຂາດທຶນຈາກການດຳເນີນງານ		**(1.501.176.046)**	**(561.824.411)**
ລາຍຈ່າຍທາງການເງິນ		(196.021.604)	(53.174.387)
ກຳໄລ/ຂາດທຶນກ່ອນຫັກອາກອນກຳໄລ		**(1.697.197.650)**	**(614.998.798)**
ອາກອນກຳໄລ		-	(36.096.857)
ຂາດທຶນສຸດທິສຳລັບງວດ		**(1.697.197.650)**	**(651.095.655)**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	9	(17)	(7)

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 25 ສິງຫາ 2020

ທ່ານ ວັນສະເຫຼີມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 25 ສິງຫາ 2020

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 12 ແມ່ນເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນ.

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2020

	ທຶນຈົດທະບຽນ	ສ່ວນເພີ່ມທຶນ	ກຳໄລສະສົມ		ລວມ
			ຄ້າງສະສົມຕາມ ລະບຽບການ	ກຳໄລສະສົມ ລໍຖ້າແບ່ງປັນ	
	ກີບ	ກີບ	ກີບ	ກີບ	ກີບ
ຍອດຍົກມາ					
ໃນວັນທີ 1 ມັງກອນ 2020 - ກ່ອນສອບ	50.000.000.000	3.269.466.406	907.166.353	5.761.785.567	59.938.418.326
ຂາດທຶນໃນງວດ	-	-	-	(1.697.197.650)	(1.697.197.650)
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2020- ທີ່ບທວນຄືນ	**50.000.000.000**	**3.269.466.406**	**907.166.353**	**4.064.587.917**	**58.241.220.676**
ຍອດຍົກມາ					
ໃນວັນທີ 1 ມັງກອນ 2019 - ກ່ອນສອບ	50.000.000.000	3.269.466.406	887.496.413	5.584.756.113	59.741.718.932
ຂາດທຶນໃນງວດ	-	-	-	(651.095.655)	(651.095.655)
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2019 - ທີ່ບທວນຄືນ	**50.000.000.000**	**3.269.466.406**	**887.496.413**	**4.933.660.458**	**59.090.623.277**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 25 ສິງຫາ 2020

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 25 ສິງຫາ 2020

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລະຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2020

	ບິດ ອະທິບາຍ	ທີ່ຍທອນຄືນ 30 ມິຖຸນາ 2020 ກີບ	ທີ່ຍທອນຄືນ 30 ມິຖຸນາ 2019 ກີບ
ຂາດທຶນກ່ອນເສຍອາກອນ		**(1.697.197.650)**	**(614.998.798)**
ລາຍການປັບປຸງ:			
ຄ່າຫຼ້ຍຫ້ຽນ	4	1.212.509.372	943.945.340
ຄ່າຕັດຮອນ	5	414.898.863	412.619.200
ຂາດທຶນຈາກການສະສາງຊັບສິນບັດຄົງທີ່ມີຕົວຕົນອອກ			-
ການສະສາງຂອງເຄື່ອງໃນສາງ			100.420.560
ຂາດທຶນຈາກອັດຕາແລກປ່ຽນ		341.854.573	682.793.855
ລາຍຈ່າຍອັດຕາດອກເບ້ຍ		-	53.174.387
ການປ່ຽນແປງໃນ ທຶນໝຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(660.990.057)	4.281.685.406
ເຄື່ອງໃນສາງ, ສຸດທິ		1.129.773.119	(942.527.976)
ວັດສະດຸສະໜອງ, ສຸດທິ		199.458.013	(4.139.595.302)
ເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ-ເບ້ຍປາມເພື່ອຂາຍ		(115.233.582)	(456.768.906)
ຊັບສິນໝຸນວຽນອື່ນໆ		(114.249.669)	975.803.529
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		125.832.043	(1.757.138.066)
ໜີ້ສິນໝຸນວຽນອື່ນໆ		52.217.783	382.120.483
ກະແສເງິນສົດຈາກກິດຈະກຳການດຳເນີນງານ, ສຸດທິ		**888.872.808**	**(78.466.288)**
ອາກອນກຳໄລທີ່ຈ່າຍ		(135.620.263)	(192.962.324)
ດອກເບ້ຍທີ່ຈ່າຍ		(206.383.754)	(53.174.385)
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**546.868.791**	**(324.602.997)**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 25 ສິງຫາ 2020

ທ່ານ ວັນສະເຫຼີມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ:25 ສິງຫາ 2020

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລະຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2020

	ຫົວ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2020 ກີບ	ທີ່ບທວນຄືນ 30 ມິຖຸນາ 2019 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສົມບັດຄົງທີ່		(49.707.525)	(1.243.020.837)
ຈ່າຍຄ່າຕົ້ນທຶນການປູກຕົ້ນປາມ		(1.145.930.315)	(552.708.882)
ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ		**(1.195.637.840)**	**(1.795.729.719)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຢືມ	6	1.789.200.000	2.972.545.482
ຈ່າຍເງິນຄືນຈາກການເງິນກູ້ຢືມ	6	(1.798.000.000)	(1.355.822.940)
ຈ່າຍເງິນຕົ້ນຄືນຈາກການເຊົ່າຊື້		(395.019.327)	(39.853.250)
ເງິນສົດສຸດທິໃຊ້ໃນກິດຈະກຳການເງິນ		**(403.819.327)**	**1.576.869.292**
ເພີ່ມຂຶ້ນສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**(1.052.588.376)**	**(543.463.424)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ		1.642.354.110	4.823.430.665
ກຳໄລ/ຂາດທຶນຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		12.544.062	29.760.919
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ		**602.309.796**	**4.309.728.160**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ການໄດ້ມາຂອງຊັບສົມບັດຄົງທີ່ມີຕິວຕົນ ທີ່ຍັງບໍ່ໄດ້ຊຳລະ		1.931.344.586	1.291.312.118

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 25 ສິງຫາ 2020

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 25 ສິງຫາ 2020

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້ (ທົບທວນຄືນ)
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2020

1 ຂໍ້ມູນທົ່ວໄປ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດ ມະຫາຊົນ ທີ່ສ້າງຕັ້ງຂຶ້ນ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ມີສຳນັກງານຈົດທະບຽນຕັ້ງຢູ່ ບ້ານອັດໄຕນ້ອຍທົ່ງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນ ອຸດສາຫະກຳນ້ຳມັນປາມ ເຊິ່ງເລີ່ມຈາກການເພາະປູກເບ້ຍຕົ້ນປາມ (Palm), ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍຜະລິດຕະພັນປາມໂດຍບໍລິສັດເອງ. ນອກຈາກນີ້ບໍລິສັດຍັງສະໜອງເບ້ຍຕົ້ນປາມໃຫ້ປະຊາຊົນ ສຳລັບການເພາະປູກ ແລະ ເກັບຊື້ຄືນໝາກປາມ.

ນອກຈາກນີ້ ບໍລິສັດ ຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ ເຊັ່ນນ້ຳມັນປຸງແຕ່ງອາຫານ ແລະ ນ້ຳໝາກພ້າວ ຈາກປະເທດໄທ ເພື່ອຈຳໜ່າຍ ໃນ ສປປ ລາວ.

ຮູບແບບການນຳສະເໜີ ເອກະສານລາຍງານການເງິນນີ້ແມ່ນກະທັດຮັດ ແລະ ນຳສະເໜີຕາມຄວາມຕ້ອງການ ຂອງຜູ້ບໍລິຫານ ເຊິ່ງອາດຈະບໍ່ສອດຄ່ອງກັບການປະຕິບັດຂອງສາກົນ ແລະ ບໍ່ມີການສົມທຽບກັບຂໍ້ມູນການເງິນ ຂອງປີຜ່ານມາ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກຜູ້ອຳນວຍການໃນວັນທີ 25 ສິງຫາ 2020.

2 ເຫດການທີ່ສຳຄັນໃນປັດຈຸບັນ

ການລະບາດຂອງພະຍາດ Coronavirus 2019 ("COVID-19") ໃນຕົ້ນປີ 2020 ມີຜົນກະທົບທີ່ບໍ່ດີຕໍ່ຜົນການດຳເນີນງານສຳລັບ ໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020 ໂດຍສະເພາະຕໍ່ທຸລະກິດການຄ້າ.

ບັນດາມາດຕະການປ້ອງກັນລ່ວງໜ້າທີ່ສືບຕໍ່ໄດ້ຮັບການປະຕິບັດໃນທົ່ວພາກພື້ນແມ່ນເປັນຈຳກັດ ແລະ ຄວບຄຸມຂອງການລະບາດເຊື້ອ ພະຍາດ. ດັ່ງນັ້ນ, ລາຍຮັບຈາກການຂາຍນ້ຳມັນ Biodiesel 05 ແມ່ນຫຼຸດລົງປະມານ 15 ຕື້ກີບ ຫຼື 50% ຂອງລາຍຮັບສຳລັບໄລຍະ 6 ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020 ສົມທຽບໃສ່ໄລຍະ 6 ຕົ້ນປີສິ້ນສຸດວັນທີ 30 ມິຖຸນາປີ 2019. ເຖິງຢ່າງໃດກໍ່ຕາມ, ການດຳເນີນ ງານສ່ວນໃຫຍ່ໄດ້ກັບຄືນສູ່ປົກກະຕິໃນເດືອນ ມິຖຸນາ 2020. ບໍລິສັດຍັງເອົາໃຈໃສ່ຕໍ່ການຕິດຕາມຢ່າງໃກ້ສິດກ່ຽວກັບສະຖານະການ ການລະບາດຂອງພະຍາດ COVID-19, ເພື່ອປະເມີນຜົນກະທົບຂອງພະຍາດດັ່ງກ່າວຕໍ່ການດຳເນີນງານເຊິ່ງຢູ່ໃນໄລຍະການອາຍຸດທະ ສາດໃນການແກ້ໄຂຢ່າງມີປະສິດຕິຜົນ.

3 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນກາງປີ ໄດ້ຖືກສ້າງຂຶ້ນສອດຄ່ອງກັບນະໂຍບາຍການບັນຊີ ຂອງ ບໍລິສັດ ທີ່ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2019. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບເບັດເສັດ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສ ເງິນສົດ) ທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີ ຕາມກົດລະບຽບການເປີດເຜີຍ ທີ່ອອກໂດຍ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.

ເອກະສານລາຍງານການເງິນ 6 ເດືອນຕົ້ນປີ ຕ້ອງໄດ້ອ່ານຄວບຄູ່ກັບ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019.

3 ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

ລາຍຈ່າຍທີ່ເກີດຂຶ້ນບໍ່ສະໝ່ຳສະເໝີ ທີ່ເກີດຂຶ້ນໃນຮອບໄລຍະປີການບັນຊີ ຈະຖືກປະມານການ ແລະ ບັນທຶກເປັນລາຍຈ່າຍລໍຖ້າຕັດຈ່າຍໃນເອກະສານລາຍງານການເງິນກາງປີ ກໍຕໍ່ເມື່ອລາຍຈ່າຍດັ່ງກ່າວມີຄວາມເໝາະສົມທີ່ຈະປະມານການ ຫລື ເໝາະສົມທີ່ຈະເລື່ອນການຮັບຮູ້ລາຍຈ່າຍດັ່ງກ່າວໄປບັນທຶກເມື່ອສິ້ນສຸດຮອບໄລຍະປີການບັນຊີ.

ອີງຕາມກົດໝາຍວ່າດ້ວຍການບັນຊີ ແລະ ຂໍ້ກຳນົດກ່ຽວກັບການບັນຊີ ແລະ ການກວດສອບບັນຊີ ໃນສ່ວນຫຼັກຊັບພາຍໃຕ້ ສຳນັກງານຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (LSCO) ໃນ ສປປ ລາວ, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງສ້າງເອກະສານລາຍງານການເງິນຕາມມາດຕະຖານລາຍງານການເງິນສາກົນ (IFRS) ເຊິ່ງເປັນວິທີການບັນຊີທີ່ຮັບຮອງໂດຍທົ່ວໄປ. ເຖິງຢ່າງໃດກໍຕາມ , ກະຊວງການເງິນໄດ້ອອກແຈ້ງການເລກທີ 697/ກງ ໃນວັນທີ 20 ມີນາ 2017 ເຊິ່ງໃຫ້ທາງເລືອກສຳລັບ PIEs ໃນການກະກຽມແຜນການນຳໃຊ້ມາດຕະຖານ IFRS ພາຍໃນໄລຍະ 4 ປີ ແລະ ໃນວັນທີ 25 ພຶດສະພາ 2020 ຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກແຈ້ງການ ສະບັບເລກທີ 0009/ຄຄຊ, ເຊິ່ງໄດ້ລະບຸກ່ຽວກັບການຍືດເວລາສຳລັບບໍລິສັດຈົດທະບຽນເພື່ອກະກຽມແຜນການປະຕິບັດມາດຕະຖານ IFRS ຈົນຮອດວັນທີ 31 ທັນວາ 2025 ແລະ ໃຫ້ເລີ່ມຈັດຕັ້ງປະຕິບັດ ເຊິ່ງມີຜົນບັງຄັບໃຊ້ ຕັ້ງແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ໃນປະເທດລາວ ຂໍ້ແຕກຕ່າງທີ່ມີສາລະສຳຄັນລະຫວ່າງບັນຊີຂອງບໍລິສັດ ກັບ IFRS ໃນຫຼາຍໆດ້ານ ເຊັ່ນ: ຊັບສິນບັດຄົງທີ່ ມີຕົວຕົນ, ສັນຍາເຊົ່າ, ລາຍຮອນລາຍໄດ້, ຄ່າໃຊ້ຈ່າຍກ່ອນການດຳເນີນງານ ແລະ ຕົ້ນທຶນເງິນກູ້ຢືມ. ຜູ້ໃຊ້ເອກະສານລາຍງານການເງິນຄວນເຂົ້າໃຈຄວາມແຕກຕ່າງທີ່ອາດມີຜົນກະທົບຕໍ່ການຕັດສິນໃຈໃນການນຳໃຊ້ຂໍ້ມູນໃນເອກະສານລາຍງານການເງິນ ແລະ ນຳໃຊ້ຢ່າງລະມັດລະວັງ.

4 ຊັບສິນຄົງທີ່ ມີຕົວຕົນ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2020	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ - ກວດສອບ	**23.037.515.848**
ເພີ່ມຂຶ້ນ	49.707.525
ສະສາງ	-
ຄ່າຫຼຸ້ຍຫ້ຽນ	(1.212.509.372)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2020 - ທີບ ທອນຄົນ	**21.874.714.001**

ການເພີ່ມຂຶ້ນຂອງຊັບສິນຄົງທີ່ມີຕົວຕົນໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020 ສ່ວນຫຼາຍແມ່ນການຈັດຊື້ເຄື່ອງຈັກ ແລະ ການກໍ່ສ້າງສາງໃນແຂວງສາລະວັນ.

5 ເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2020	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ - ກວດສອບ	**23.056.340.152**
ເພີ່ມຂຶ້ນ	1.145.930.315
ຫັກ: ຄ່າຕັດຮອນ	(414.898.863)
ຍອດເຫຼືອທ້າຍ - ທີ່ບທວນຄືນ	**23.787.371.604**
ເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ	26.314.135.461
ຫັກ: ຄ່າຕັດຮອນສະສົມ	(2.526.763.857)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2020 - ທີ່ບທວນຄືນ	**23.787.371.604**

ໃນວັນທີ 30 ມິຖຸນາ 2020, ມີສວນປາມທີ່ພ້ອມຈະເກັບກ່ຽວ 3 ສວນ ເຊິ່ງມີຕົ້ນທຶນການປຸກເຍື່ອນລໍຖ້າຕັດມູນຄ່າ 20.798.314.479 ກີບ ແລະ ໄດ້ຕັດຮອນ ແລະ ບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ ສຳລັບ 6 ເດືອນຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2020 ມູນຄ່າ 414.898.863 ກີບ (2019: 412.619.200 ກີບ).

ການເພີ່ມຂຶ້ນສ່ວນໃຫຍ່ແມ່ນການປຸກຕົ້ນປາມໃໝ່ ຢູ່ທີ່ ເມືອງ ສະໝ້ວຍ, ແຂວງສາລະວັນ.

6 ເງິນກູ້ຍືມໄລຍະສັ້ນ

	ກີບ
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ - ກວດສອບ	**3.489.266.000**
ເພີ່ມຂຶ້ນ	1.789.200.000
ຈ່າຍຄືນ	(1.798.000.000)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2020 - ທີ່ບທວນຄືນ	**3.489.466.000**

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020, ບໍລິສັດໄດ້ຖອນເງິນກູ້ໄລຍະສັ້ນເພີ່ມເຕີມຈາກທະນາຄານໄຊ່ງ່ອນ-ຮ່າໂນ້ຍ ລາວ ຈຳກັດ ມູນຄ່າ 1.789.200.000 ກີບ ແລະ ໄດ້ມີການຈ່າຍເງິນຕົ້ນຄືນໃຫ້ແກ່ທະນາຄານມູນຄ່າ 1.798.000.000 ກີບ.

7 ໜີ້ຕ້ອງສົ່ງຈາກການເຊົ່າຊື້

	ທົບທວນຄືນ 30 ມິຖຸນາ 2020 ກີບ
ໝຸນວຽນ	
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	594.210.536
ບໍ່ໝຸນວຽນ	
ໜີ້ຕ້ອງສົ່ງຈາກການເຊົ່າຊື້	1.290.726.603
	1.884.937.139

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020, ບໍລິສັດໄດ້ຊຳລະເງິນຕົ້ນມູນຄ່າ 1.293.750 ບາດ ຫຼືເທົ່າກັບ 395.019.327 ກີບ ແລະ ຊຳລະດອກເບ້ຍມູນຄ່າ 194.063 ບາດ ຫຼືເທົ່າກັບ 57.935.419 ກີບ ໃຫ້ກັບບໍລິສັດ ວິນອໍໂຕ ຊັບ ພາຍ ຈຳກັດ ຈຳນວນ 5 ຄັນ. ນອກຈາກນີ້, ບໍລິສັດໄດ້ຊຳລະເງິນຕົ້ນມູນຄ່າ 8.783.202 ກີບ ແລະ ຊຳລະດອກເບ້ຍມູນຄ່າ 2.898.456 ກີບ ໃຫ້ກັບບໍລິສັດ ດີຈີບີ ລາວ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 1 ຄັນ.

8 ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ບໍລິສັດ ມີພັນທະໃນການຊຳລະອາກອນກຳໄລ ໃນຮູບແບບຂອງອາກອນ ກຳໄລໃນອັດຕາໃໝ່ ແມ່ນ 20% (ປີຜ່ານມາ: 24%) ຂອງກຳໄລທາງອາກອນ. ນອກຈາກນີ້, ບໍລິສັດຈົດທະບຽນໃນຕະຫລາດ ຫຼັກຊັບລາວ ເຊິ່ງອີງຕາມລະບຽບຂອງຕະຫຼາດຫຼັກຊັບ ບໍລິສັດຈະໄດ້ຮັບສ່ວນຫຼຸດຕື່ມອີກ 5% ຈາກອັດຕາອາກອນກຳໄລປະຈຳ ປີ ເປັນເວລາ 4 ປີນັບຈາກປີທີ່ບໍລິສັດໄດ້ເຂົ້າຕະຫຼາດຫຼັກຊັບ ອີງຕາມກົດໝາຍວ່າດ້ວຍອາກອນຂອງສປປລາວ.

ລະບົບອາກອນໃນ ສປປ ລາວ ແມ່ນຂ້ອນຂ້າງໃໝ່ ແລະ ມີອາກອນທີ່ຫຼາກຫຼາຍ ແລະ ມັກມີການດັດປັບກົດໝາຍເລື້ອຍໆ ຊຶ່ງ ມັນບໍ່ຈະແຈ້ງ, ຂັດແຍ້ງກັນ ແລະ ມີການຕີຄວາມໝາຍທີ່ແຕກຕ່າງກັນກັບທີ່ມີຢູ່ໃນໜ່ວຍງານໄລ່ລຽງອາກອນ ແລະ ເຂດອຳນາດ ສານ. ອາກອນອາດມີການທົບທວນ ແລະ ກວດສອບຄືນຈາກເຈົ້າໜ້າທີ່ ຜູ້ເຊິ່ງສາມາດປັບໃໝ ແລະ ລົງໂທດ.

ປັດໃຈເຫຼົ່ານີ້ ອາດສ້າງຄວາມສ່ຽງທາງອາກອນໃນ ສປປ ລາວ ທີ່ມີສາລະສຳຄັນກວ່າປະເທດອື່ນໆ. ຜູ້ບໍລິຫານ ເຊື່ອວ່າຕ ໄດ້ຈັດ ກຽມຢ່າງພຽງພໍສຳລັບໜີ້ຕ້ອງສົ່ງອາກອນ ຕາມການຕີຄວາມຂອງ ກົດໝາຍສ່ວຍສາອາກອນ. ເຖິງຢ່າງໃດກໍ່ຕາມ ເຈົ້າໜ້າທີ່ທີ່ ກ່ຽວຂ້ອງອາດມີການຕີຄວາມທີ່ແຕກຕ່າງກັນ ແລະ ຜົນກະທົບຂອງຄວາມແຕກຕ່າງດັ່ງກ່າວອາດມີສາລະສຳຄັນ.

ໃນລະຫວ່າງກາງປີ ສິ້ນສຸດວັນທີ 30 ມິຖຸນາ 2020, ບໍລິສັດໄດ້ຮັບຮູ້ອາກອນລາຍຮັບໃນໃບລາຍງານຜົນໄດ້ຮັບມູນຄ່າສຸນກີບ.

9 ກຳໄລຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຖືກຄິດໄລ່ຕາມອັດຕາສ່ວນຂອງກຳໄລຕໍ່ຜູ້ຖືຫຸ້ນໂດຍຄິດໄລ່ແບບອັດຕາທ່ວງນ້ຳໜັກສະເລ່ຍຂອງ ຈຳນວນຮຸ້ນສາມັນ

	ສຳລັບ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2020	ສຳລັບ 6 ເດືອນ ຕົ້ນ ປີສິ້ນສຸດວັນທີ 30 ມິຖຸນາ 2019
ກຳໄລສຳລັບຜູ້ຖືຮຸ້ນສາມັນ (ກີບ)	**(1.697.197.650)**	**(651.095.655)**
ອັດຕາທ່ວງນ້ຳໜັກສະເລ່ຍຂອງຈຳນວນຮຸ້ນສາມັນ ຄົງເຫຼືອ (ຮຸ້ນ)	100.000.000	100.000.000
ກຳໄລພື້ນຖານຕໍ່ຮຸ້ນ (ກີບຕໍ່ຮຸ້ນ)	(17)	(7)

10 ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍ ຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບ ບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ. ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນລຸ່ມນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງໃນໄລຍະ 6 ເດືອນຕົ້ນປີ:

10.1 ການຊື້ສິນຄ້າ

	ທີ່ບທວນຄືນ 30 ມິຖຸນາ 2020 ກີບ	ທີ່ບທວນຄືນ 30 ມິຖຸນາ 2019 ກີບ
ຊື້ສິນຄ້າ ແລະ ລາຍການອື່ນໆກັບພາກສ່ວນທີ່ກ່ຽວຂ້ອງ		
- ບໍລິສັດ OPG Tech (ປະເທດໄທ)	2.061.485.754	1.673.029.502

ລາຍການເຄື່ອນໄຫວຂ້າງເທິງສ່ວນໃຫຍ່ແມ່ນສິນຄ້າສຳເລັດຮູບ ເຊັ່ນ ນ້ຳມັນປຸງແຕ່ງອາຫານ, ກາກປາມ ແລະ ສານເຄມີ methanol ນຳເຂົ້າຈາກ ບໍລິສັດ OPG Tech (ປະເທດໄທ) ເພື່ອຈຳໜ່າຍໃນ ສປປ ລາວ ໂດຍ ບໍລິສັດ.

10 ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

10.2 ຍອດເຫຼືອຈາກການຊື້ ແລະ ການຂາຍສິນຄ້າ ແລະ ລາຍການອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2020 ກີບ	ກວດສອບ 31 ທັນວາ 2019 ກີບ
ໜີ້ຕ້ອງສົ່ງໃຫ້:		
ພາກສ່ວນທີ່ກ່ຽວຂ້ອງ – OPG Tech	41.133.651	5.291.898.297

ໃນວັນທີ 30 ມິຖຸນາ 2019, ໜີ້ຕ້ອງສົ່ງກັບພາກສ່ວນທີ່ກ່ຽວຂ້ອງ ສ່ວນໃຫຍ່ໝາຍເຖິງ ຍອດຄ້າງຊຳລະຈາກຊັບສົມບັດຄົງທີ່ຈາກ ບໍລິສັດ OPG Tech (ປະເທດໄທ) ນັບແຕ່ປີ 2017.